Office of
Community Empowerment and Opportunity
CITY OF PHILADELPHIA




# ຮັບເງິນສະໜັບສະໜູນສູງເຖິງ $7,830 ພ້ອມ ເຄຣດິດພາສີເງິນໄດ້ຂອງລັດຖະບານກາງສະຫະລັດ (EITC).

ສິ່ງນີ້ແມ່ນການຄືນເງິນພາສີລັດຖະບານກາງສຳລັບຜູ້ຄົນ ແລະ ຄອບຄົວທີ່ເຮັດວຽກທີ່ເຂົ້າເກນຂໍ້ກຳນົດລາຍໄດ້ທີ່ແນ່ນອນ. ບໍ່ມີເງື່ອນໄຂໃດໆ. ບໍ່ມີຂໍ້ຜູກມັດໃດໆ. ມັນເປັນເງິນຂອງທ່ານເພື່ອໃຊ້ຕາມທີ່ທ່ານຕ້ອງການ ແລະ ທ່ານສາມາດຮ້ອງຂໍເອົາມັນໄດ້ຟຣີ.

## ທ່ານສາມາດຮັບ EITC ຂຶ້ນກັບ:

### ສະຖານະການຍື່ນ

ທ່ານມີເລກປະກັນສັງຄົມທີ່ໃຊ້ໄດ້.

### ລະດັບລາຍໄດ້

ທ່ານມີລາຍໄດ້ໜ້ອຍກວ່າ $59,899 ຈາກວຽກໃນປີ 2024, ຖ້າໂສດ.

### ການມີສິດໄດ້ຮັບ

ທ່ານຕ້ອງມີອາຍຸຢ່າງໜ້ອຍ 25 ປີ ແຕ່ບໍ່ເກີນ 65 ປີ, ຖ້າທ່ານບໍ່ມີຜູ້ທີ່ຍັງເພິ່ງພາອາໄສ. ຖ້າທ່ານມີອາຍຸນ້ອຍກວ່າ ຫຼື ສູງກວ່າ, ທ່ານອາດມີສິດໄດ້ຮັບຫາກທ່ານຮຽກຮ້ອງວ່າເປັນ ຜູ້ທີ່ຍັງເພິ່ງພາອາໄສ.

ພົນລະເມືອງພິລາເດລເພຍ 40,000 ຄົນພາດໃນການຮ້ອງຂໍເອົາການຄືນເງິນຂອງພວກເຂົາໃນແຕ່ລະປີ. ເງິນຄືນສະເລ່ຍແມ່ນ $2,250. ບໍ່ມີເຫດຜົນໃດໆທີ່ຈະປ່ອຍເງິນນັ້ນໄວ້ໃນກະເປົາຂອງລັດຖະບານເມື່ອມັນສາມາດເອົາໄດ້—ແລະ ມັນຄວນ—ເປັນຂອງທ່ານ! ຖ້າທ່ານມີລູກ, ທ່ານອາດຍັງມີສິດສຳລັບເຄຣດິດພາສີເດັກນ້ອຍ (Child Tax Credit).

## ຍື່ນຟຣີ!

ຢ່າເສຍເງິນເພື່ອຮຽກຮ້ອງການຄືນເງິນຂອງທ່ານ. Philly ມີຄູ່ຮ່ວມມືທີ່ເຊື່ອຖືໄດ້ທີ່ສາມາດຊ່ວຍທ່ານຮຽກຮ້ອງ EITC ແລະ ການຄືນເງິນອື່ນໆໂດຍບໍ່ເສຍຄ່າໃດໆ. ເຂົ້າໄປທີ່

**ClaimYourMoneyPHL.com**

ເພື່ອຕິດຕໍ່ແຄມເປນສຳລັບຄອບຄົວທີ່ ເຮັດວຽກ ຫຼື Ceiba.

## ລະດູການເສຍພາສີແມ່ນເປີດແລ້ວ!

## ວັນຄົບກຳນົດຈົນເຖິງການຍື່ນແມ່ນ 15 ເມສາ.

ຮ່ວມມືກັບ

CWF CAMPAIGN FOR WORKING FAMILIES

Ceiba

CWFphilly.org

CeibaPhiladelphia.org

ສະແກນບ່ອນນີ້ ຫຼື ເຂົ້າເບິ່ງ **ClaimYourMoneyPHL.com** ສຳລັບເອກະສານເປັນພາສາອື່ນ.

Office of
Community Empowerment and Opportunity
CITY OF PHILADELPHIA




## ຮັບເງິນສະໜັບສະໜູນ $2,000 ຕໍ່ລູກໜຶ່ງຄົນພ້ອມເຄຣດິດພາສີເດັກນ້ອຍຂອງລັດຖະບານກາງ (CTC).

ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກສາມາດໃຊ້ສິດຮັບເອົາການຄືນເງິນພາສີທີ່ຫຼາຍກວ່າໂດຍການຮຽກຮ້ອງ CTC. ເກນການມີຄຸນສົມບັດໄດ້ຮັບ ແລະຈຳນວນຂອງການຄືນເງິນແມ່ນໄດ້ປ່ຽນແປງເມື່ອບໍ່ດົນຜ່ານມານີ້, ສະນັ້ນ ຕິດຕໍ່ພວກເຮົາມື້ນີ້ເພື່ອເບິ່ງວ່າ ຖ້າທ່ານມີຄຸນສົມບັດໄດ້ຮັບຫຼືບໍ່. ທ່ານຍັງສາມາດຮຽກຮ້ອງເອົາເງິນຂອງທ່ານໂດຍບໍ່ເສຍຄ່າໄດ້.

### ສິ່ງທີ່ທ່ານຄວນຮູ້ກ່ຽວກັບ CTC:

- **ພໍ່ແມ່ ຫຼື ຜູ້ປົກຄອງຫຼາຍຄົນແມ່ນມີສິດໄດ້ຮັບ.** ຖ້າລູກຂອງທ່ານມີເລກປະກັນສັງຄົມ ແລະ ມີອາຍຸຕໍ່າກວ່າ 17 ປີໃນປີ 2024, ທ່ານອາດມີຄຸນສົມບັດໄດ້ຮັບ. ພໍ່ເຖົ້າ/ແມ່ເຖົ້າ, ພໍ່ແມ່ລ້ຽງ ແລະ ພໍ່ແມ່ບຸນທຳ ແລະ ຄົນອື່ນໆອາດມີສິດໄດ້ຮັບຖ້າພວກເຂົາສາມາດໃຊ້ສິດຮັບວ່າເດັກນ້ອຍເປັນຜູ້ທີ່ຍັງເພິ່ງພາອາໄສ.
- **ບໍ່ເປັນຫຍັງຫາກທ່ານບໍ່ມີລາຍຮັບຫຼາຍ.** ເຖິງແມ່ນວ່າທ່ານບໍ່ມີລາຍຮັບພຽງພໍເພື່ອຍື່ນພາສີ, ທ່ານອາດມີສິດບາງສ່ວນຂອງການຄືນເງິນ CTC. ພວກເຮົາສາມາດຊ່ວຍຕັດສິນ ຫາກທ່ານມີຄຸນສົມບັດຫຼືບໍ່.
- **ມັນຈະບໍ່ກະທົບຜົນປະໂຫຍດຂອງທ່ານ.** ການຄືນເງິນ CTC ບໍ່ນັບເປັນລາຍໄດ້ ແລະ ບໍ່ກະທົບການມີຄຸນສົມບັດໄດ້ຮັບ SNAP, Medicaid ຫຼື ຜົນປະໂຫຍດອື່ນຂອງທ່ານ.
- **ທ່ານບໍ່ຈຳເປັນຕ້ອງຈ່າຍເງິນຄືນ.** ມັນເປັນເງິນຂອງທ່ານ, ຟຣີ ແລະ ຊັດເຈນ, ສຳລັບທຸກສິ່ງທີ່ຄອບຄົວຂອງທ່ານຕ້ອງການ.
- **ພາດໂອກາດຕໍ່ກັບ CTC ໃນປີຜ່ານມາບໍ?** ຖ້າທ່ານບໍ່ໄດ້ຍື່ນເສຍພາສີສຳລັບປີ 2021, 2022 ຫຼື 2021, ທ່ານອາດພາດໂອກາດຮັບເງິນຫຼາຍພັນໂດລາ. ຜູ້ປົກຄອງບາງຄົນທີ່ມີລາຍໄດ້ໜ້ອຍເຖິງ $0 ກໍມີສິດ. ຕິດຕໍ່ພວກເຮົາເພື່ອຍື່ນການຄືນພາສີຂອງປີກ່ອນນີ້ ແລະ ຮຽກຮ້ອງເອົາເຄຣດິດທີ່ທ່ານພາດໄປ.

### ຍື່ນຟຣີ!

ຢ່າເສຍເງິນເພື່ອຮຽກຮ້ອງເອົາເງິນຂອງທ່ານ. Philly ມີຄູ່ຮ່ວມມືທີ່ເຊື່ອຖືໄດ້ທີ່ສາມາດຊ່ວຍທ່ານຮຽກຮ້ອງ CTC ແລະ ການຄືນເງິນອື່ນໆໂດຍບໍ່ເສຍຄ່າ. ເຂົ້າໄປທີ່

**ClaimYourMoneyPHL.com**

ເພື່ອຕິດຕໍ່ເຄມເປນສຳລັບຄອບຄົວທີ່ເຮັດວຽກງານຫຼື Ceiba.

**ລະດູການເສຍພາສີແມ່ນເປີດແລ້ວ!**

**ວັນຄົບກຳນົດຈົນເຖິງການຍື່ນແມ່ນ 15 ເມສາ.**

ສະແກນບ່ອນນີ້ ຫຼື ເຂົ້າເບິ່ງ **ClaimYourMoneyPHL.com** ສຳລັບເອກະສານເປັນພາສາອື່ນ.

ຮ່ວມມືກັບ

CWF CAMPAIGN FOR WORKING FAMILIES — CWFphilly.org

Ceiba — CeibaPhiladelphia.org